ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມປະກອບຄໍາເຫັນຕໍ່ຮ່າງດໍາລັດວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ

ໃນຕອນເຊົ້າຂອງວັນທີ 27 ມີນາ 2018 ຢູ່ທີ່ຫ້ອງປະຊຸມສະຖາບັນການທະນາຄານໄດ້ມີການຈັດກອງປະຊຸມເປີດກວ້າງເພື່ອປະກອບຄໍາເຫັນຕໍ່ຮ່າງດໍາລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນໂດຍພາຍໃຕ້ການເປັນປະທານຂອງ ທ່ານ ໄຊລືຊາ ຜຸຍຍະວົງ ວ່າການຫົວໜ້າກົມ, ກົມນິຕິກໍາ, ທະນາຄານແຫ່ງ ສປປ ລາວ ຊຶ່ງມີຄະນະອໍານວຍການທະນາຄານທຸລະກິດລັດ, ຄະນະອໍານວຍການສະຖາບັນການເງິນ, ຜູ້ຕາງໜ້າຈາກກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ກະຊວງຖະແຫຼງຂ່າວ, ວັດທະນາທໍາ ແລະ ທ່ອງທ່ຽວ. ນອກຈາກນີ້ ກໍ່ມີຜູ້ຕາງໜ້າຂອງທະນາຄານທຸລະກິດ, ສະຖາບັນການເງິນ ແລະ ຕົວແທນຜູ້ຊົມໃຊ້ທາງດ້ານການເງິນເຂົ້າຮ່ວມຈໍານວນ 100 ກວ່າທ່ານ.

ກອງປະຊຸມເທື່ອນີ້ກໍເພື່ອເຮັດໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການກໍານົດນິຕິກໍາເພື່ອຄຸ້ມຄອງວຽກງານການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ, ກໍຄືການກໍານົດນິຕິກໍາໃນການປະພຶດ ແລະ ປະຕິບັດໃນວຽກງານດັ່ງກ່າວ. ເນື່ອງຈາກວ່າວຽກງານດັ່ງກ່າວມີທັງຜົນດີ ແລະ ມີຜົນກະທົບໂດຍກົງຕໍ່ການໃຊ້ບໍລິການ, ການໃຫ້ບໍລິການທາງດ້ານການເງິນທີ່ມີຄວາມຫຼາກຫຼາຍ, ກໍາລັງຂະຫຍາຍຕົວສູ່ບາດກ້າວໃໝ່. ສະນັ້ນ, ເພື່ອເຮັດໃຫ້ດໍາລັດດັ່ງກ່າວມີຄວາມສົມບູນແບບຄົບຖ້ວນຮັດກຸມ, ເຂົ້າໃຈງ່າຍສາມາດຮັບປະກັນໃຫ້ການຈັດຕັ້ງປະຕິບັດໄດ້ ແລະ ສາມາດປົກປ້ອງສິດຜົນປະໂຫຍດອັນຖືກຕ້ອງ, ຊອບທໍາຂອງຜູ້ຊົມໃຊ້ທາງການເງິນໃນສັງຄົມໄດ້ຢ່າງມີປະສິດທິຜົນ.

**# ຂ່າວ: ທອງຈັນ ສຸກສະກຸນ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນໍາໃຊ້ເງິນກີບ**